Lao

ラオス語

# ທ່ານມີຄວາມກັງວົນກ່ຽວກັບ<br>ພັດທະນາການຂອງລູກທ່ານບໍ່?

## ~ສໍາລັບພໍ່ແມ່ທີ່ລ້ຽງລູກໃນປະເທດຍີ່ປຸ່ນ~




ສູນຟື້ນຟູຄົນພິການແຫ່ງຊາດ

ສູນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອ
ສໍາລັບບຸກຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ

# ການແນະນຳ

ຍີ່ປຸ່ນເຫັນໄດ້ວ່າຈຳນວນຄົນຕ່າງປະເທດທີ່ດຳລົງຊີວິດ ແລະ
ການລ້ຽງດູລູກຢູ່ໃນປະເທດຍີ່ປຸ່ນແມ່ນມີການເພີ່ມຂຶ້ນ.
ໃບໂບຊົວນີ້ແມ່ນແນ່ໃສ່ພໍ່ແມ່ທີ່ມີພື້ນຖານຢູ່ຕ່າງປະເທດ
ຜູ້ທີ່:ສູ້ຊົນລ້ຽງລູກໃນປະເທດທີ່ມີວັດທະນະທຳແລະວິຖີຊີວິດທີ່ແຕກຕ່າງ

- ມີຄວາມກັງວົນກ່ຽວກັບພັດທະນາການຂອງລູກພວກເຂົາ
- ມີຄວາມຫຍຸ້ງຍາກໃນການຊອກຫາຂໍ້ມູນຂ່າວສານທີ່ພວກເຂົາຕ້ອງການສຳລັບລູກຂອງເຂົາເຈົ້າເນື່ອງຈາກມີອຸປະສັກທາງດ້ານພາສາ
- ຕ້ອງການຄວາມຊ່ວຍເຫຼືອໃນການລ້ຽງດູລູກ

ຖ້າຫາກວ່າປະຈຸບັນນີ້ທ່ານຮູ້ສຶກກັງວົນກ່ຽວກັບພັດທະນາການຂອງລູກ,
ທ່ານອາດຮູ້ສຶກຫຼົງທາງ, ບໍ່ຮູ້ວ່າຈະໄປໃສ ຫຼື ຂໍຄວາມຊ່ວຍເຫຼືອຈາກໃຜ.
ຍີ່ປຸ່ນແມ່ນມີສະຖາບັນຢູ່ໃນທົ່ວປະເທດທີ່ໃຫ້ການຊ່ວຍເຫຼືອພໍ່ແມ່ຜູ້ທີ່ເປັນຫ່ວງກັງວົນ
ກ່ຽວກັບພັດທະນາການຂອງລູກເຂົາເຈົ້າ.
ພວກເຮົາຫວັງວ່າໂບຊົວນີ້ຈະຊ່ວຍໃຫ້ທ່ານສາມາດເຊື່ອມຕໍ່ກັບຂໍ້ມູນຂ່າວສານ ແລະ
ຊ່ວຍເຫຼືອທີ່ທ່ານອາດຈະຕ້ອງການ.

ສູນພື້ນຟູຄົນພິການແຫ່ງຊາດ
ສູນຂໍ້ມູນຂ່າວສານ ແລະ ຊ່ວຍເຫຼືອສຳລັບບຸກຄົນ
ທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ

# ສາລະບານ

## ເພື່ອຮຽນຮູ້ກ່ຽວກັບພັດທະນາການຂອງລູກຂອງທ່ານ


ທ່ານອາດສັງເກດເຫັນວ່າລູກຂອງທ່ານ... 3

ຕັ້ງແຕ່ແລກເກີດຈົນເຖິງອາຍຸ 3 ປີ 3

ຕັ້ງແຕ່ອາຍຸ 3 ຫາ 6 ປີ (ອາຍຸເຂົ້າຮຽນ) 4

ການນຳໃຊ້ການກວດສຸຂະພາບ 5

ການກວດສຸຂະພາບເດັກ 5

ການກວດສຸຂະພາບອາຍຸສິບແປດເດືອນ 5

ການກວດສຸຂະພາບອາຍຸສາມປີ 6

ການກວດສຸຂະພາບໃນການເຂົ້າໂຮງຮຽນ 7

ການເຂົ້າໂຮງຮຽນ 7

ທາງເລືອກໃນໂຮງຮຽນສຳລັບເດັກນ້ອຍທີ່ມີຄວາມຕ້ອງການເປັນພິເສດ 8


## ເພື່ອປຶກສາກ່ຽວກັບພັດທະນາການຂອງລູກຂອງທ່ານ


ການນຳໃຊ້ການບໍລິການໃຫ້ຄຳປຶກສາ 9

ທາງເລືອກການໃຫ້ຄຳປຶກສາຢູ່ບ່ອນທີ່ທ່ານອາໄສຢູ່ 10


## ຄວາມຜິດປົກກະຕິທາງດ້ານພັດທະນາການແມ່ນຫຍັງ?


ກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ 12

ສູນຊ່ວຍເຫຼືອສຳລັບຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ 12


## ການໄປພົບແພດ


ການໄປພົບແພດ, ການປະເມີນ ແລະ ການບຳບັດ 13

ຖ້າລູກຂອງທ່ານຖືກກວດພົບວ່າເປັນ DD… 13

ການໃຊ້ຢາ 14


## ເພື່ອຮຽນຮູ້ກ່ຽວກັບໃບຢັ້ງຢືນຄວາມພິການ


ຕົວຢ່າງຂອງຜົນປະໂຫຍດຕ່າງໆ 15

ໃບຢັ້ງຢືນຄວາມພິການທາງສະຕິປັນຍາ 16

ໃບຢັ້ງຢືນຄວາມພິການທາງຈິດ 16


## ຂໍ້ມູນເພີ່ມເຕີມ


ໃຫ້ຄຳປຶກສາເປັນພາສາຕ່າງປະເທດ 17

ແອັບແປພາສາ 18

ຂໍ້ມູນກ່ຽວກັບການສຶກສາຂອງໂຮງຮຽນ / ຂໍ້ມູນກ່ຽວກັບຄວາມຜິດປົກກະຕິຂອງພັດທະນາການ 19

ຄຳສັບພາສາອັງກິດ-ຍີ່ປຸ່ນ 20

# ທ່ານອາດສັງເກດເຫັນວ່າລູກຂອງທ່ານ...

## ເພື່ອຮຽນຮູ້ກ່ຽວກັບພັດທະນາການຂອງລູກຂອງທ່ານ

### ຕັ້ງແຕ່ແລກເກີດ ຈົນເຖິງອາຍຸ 3 ປີ

- ສະແດງຄວາມຊັກຊ້າທາງດ້ານພັດທະນາການພາສາ
- ຢຸດເຊົາການໃຊ້ຄໍາສັບທີ່ລາວກໍາລັງໃຊ້
- ມີຄວາມຫຍຸ້ງຍາກທີ່ຈະຕິດຕໍ່ສື່ສານ, ຫຼືສື່ສານແຕ່ທາງດຽວ
- ມີສ່ວນຮ່ວມໃນກິດຈະກໍາການຫຼິ້ນອັນເກົ່າ



- ບໍ່ຄ່ອຍສົບຕາ
- ບໍ່ມັກຖືກໃຫ້ຈັບ
- ບໍ່ສະແດງໃຫ້ເຫັນການປ່ຽນແປງຫຼາຍໃນການສະແດງອອກທາງໃບໜ້າ
- ບໍ່ຕອບສະໜອງຕໍ່ການເອີ້ນຊື່



- ສະແດງຄວາມບໍ່ມັກຢ່າງຮຸນແຮງຕໍ່ກັບສິ່ງຂອງຫຼືສະຖານທີ່ທີ່ສະເພາະເຈາະຈົງ
- ຍຶດຕິດກັບ "ສິ່ງເກົ່າໆຊໍ້າໆ" (ສິ່ງດຽວກັນ, ກິດຈະກໍາອັນດຽວກັນ ແລະ ອື່ນໆ)

- ພັດທະນາການດ້ານການເຄື່ອນໄຫວຊ້າເຊັ່ນການຍົກຫົວຂຶ້ນ, ນັ່ງ, ແລະຍ່າງ
- ມີກ້າມຊີ້ນອ່ອນແອ, ແລະ/ຫຼືມີຄວາມຫຍຸ້ງຍາກໃນການຮັກສາທ່າທາງ

- ມີອາລົມໃຈຮ້າຍເປັນເວລາດົນນານ
- ພຶດຕິກໍາທໍາຮ້າຍຕົນເອງຊໍ້າໆ (ຕີຫົວ, ກັດແຂນ, ແລະ ອື່ນໆ).



- ມີຄວາມກະວົນກະວາຍຫຼາຍ
- ມັກເຫັງໄປມາ ແລະ ຕ້ອງການຄວາມສົນໃຈຢ່າງຕໍ່ເນື່ອງ
- ສະມາທິສັ້ນງ່າຍຫລາຍ



- ຮ້ອງໄຫ້ຢ່າງຮ້າຍແຮງໃນຕອນກາງຄືນເປັນເວລາຫຼາຍເດືອນ
- ບໍ່ນອນເວັນ ແລະ/ຫຼື ນອນຫລັບຍາກ
- ເລືອກກິນອາຫານ ແລະ/ຫຼື ເຄື່ອງດື່ມ



- ບໍ່ຕອບສະໜອງຕໍ່ສຽງ
- ມີຄວາມອ່ອນໄຫວຫຼາຍຕໍ່ສຽງ (ປິດເອົາຫູ)



# ຕັ້ງແຕ່ອາຍຸ 3 ຫາ 6 ປີ (ອາຍຸເຂົ້າຮຽນ)

- ບໍ່ສົນໃຈເດັກນ້ອຍຄົນອື່ນ ແລະ/ຫຼື ບໍ່ຫຼິ້ນກັບເດັກນ້ອຍຄົນອື່ນ
- ມີຄວາມສົນໃຈຈຳກັດ (ໃນບາງສີ, ບາງເຄື່ອງໝາຍການຄ້າ, ບາງສັນຍາລັກ, ບາງຕົວອັກສອນ, ບາງຕົວເລກ, ແລະອື່ນໆ)
- ຖາມຄຳຖາມດຽວ ຫຼື ຫົວຂໍ້ດຽວ ຊ້ຳໆໄປມາ
- ມັກຈະໃຊ້ເວລາຢູ່ຄົນດຽວຫຼາຍກວ່າ



- ບໍ່ສົນໃຈກົດລະບຽບ ຫຼື ຄຳສັນຍາ
- ເລີ່ມສົນທະນາຝ່າຍດຽວ ແລະ ຢຸດເມື່ອລາວເຮັດແລ້ວ
- ບໍ່ເກັ່ງໃນການຫຼິ້ນກັບໝູ່ ແລະ/ຫຼື ຮຸນແຮງກັບພວກເຂົາ
- ກະວົນກະວາຍ ແລະ ຢູ່ໃນການເຄື່ອນໄຫວຄົງທີ່
- ຍ່າງອອກໄປໂລເລດ້ອຍຕົນເອງ
- ບໍ່ໄດ້ຮັບຟັງຄຳແນະນຳ / ຄຳອະທິບາຍຈົນສຸດ



- ບໍ່ເຮັດຄືກັບເດັກນ້ອຍຄົນອື່ນໆຢູ່ໃນກິດຈະກຳເປັນກຸ່ມ
- ໃຊ້ເວລາຫຼາຍໃນການກະກຽມ ຫຼື ຈັດໃຫ້ເປັນລະບຽບ
- ບໍ່ເກັ່ງໃນການແຕ້ມຮູບ ແລະ/ຫຼື ໃຊ້ມີດຕັດ
- ບໍ່ມັກໃຫ້ຖືກຈັບບາຍ
- ຮຽນຮູ້ກິດຈະກຳການດູແລຕົນເອງຊັກຊ້າ ເຊັ່ນ: ການເຂົ້າຫ້ອງນ້ຳ ແລະ ການປ່ຽນເຄື່ອງນຸ່ງ



- ບໍ່ຮູ້ວ່າມີຄົນອື່ນກຳລັງລົມນຳຕົນເອງຢູ່
- ບໍ່ເຂົ້າໃຈຕົວອັກສອນ ຫຼື ຕົວເລກດີ
- ມີບາງສິ່ງບາງຢ່າງທີ່ລາວແມ່ນເກັ່ງຫຼາຍ, ແລະບາງສິ່ງບາງຢ່າງທີ່ບໍ່ເກັ່ງຫຼາຍ



## ພຶດຕິກຳ ແລະ ແນວໂນ້ມຂອງເດັກເຊັ່ນນີ້ອາດເປັນສາເຫດຂອງຄວາມກັງວົນຂອງພໍ່ແມ່

ທ່ານ ແລະ ຄອບຄົວຂອງທ່ານອາດຈະຮູ້ສຶກງຸດງິດ ແລະ ຄິດວ່າເຂົາເປັນບັນຫາ, ຫຼື ຮູ້ສຶກວິຕົກກັງວົນໃຈຄິດວ່າການລ້ຽງລູກຂອງທ່ານອາດຈະຜິດພາດ.

ໃນຂະນະທີ່ພຶດຕິກຳດັ່ງກ່າວແມ່ນສາມາດຢຸດໄດ້ຊົ່ວຄາວ, ມັນກໍ່ເປັນໄປໄດ້ວ່າລູກຂອງທ່ານມີບັນຫາທາງດ້ານພັດທະນາການ ຫຼື ມີຄວາມຜິດປົກກະຕິທາງດ້ານພັດທະນາການ.

# ການນຳໃຊ້ການກວດສຸຂະພາບ

ທຸກໆອຳນາດການປົກຄອງທ້ອງຖິ່ນໃຫ້ການກວດສຸຂະພາບເດັກແບບບໍ່ເສຍຄ່າ. ກະລຸນານຳໃຊ້ການກວດສຸຂະພາບ ເພາະວ່າມັນເປັນໂອກາດທີ່ສຳຄັນທີ່ຈະໄດ້ຮຽນຮູ້ກ່ຽວກັບສຸຂະພາບ ແລະ ພັດທະນາການຂອງລູກທ່ານ.

ສຳລັບລາຍລະອຽດຂອງຕາຕະລາງການກວດສຸຂະພາບ, ກະລຸນາຕິດຕໍ່ອຳນາດການປົກຄອງທ້ອງຖິ່ນຂອງທ່ານ ເພາະວ່າແຕ່ລະພື້ນທີ່ແມ່ນປະຕິບັດຕາມຕາຕະລາງທີ່ແຕກຕ່າງກັນ.

## ການກວດສຸຂະພາບເດັກ

**ກວດຕອນໃດ?** ເມື່ອລູກຂອງທ່ານມີອາຍຸ 3 ຫາ 4 ເດືອນ

**ສິ່ງທີ່ຄາດຫວັງແມ່ນຫຍັງ?**
- ການກວດໂດຍທ່ານໝໍ
- ກວດເຊັກຄວາມສູງ ແລະ ນ້ຳໜັກ
- ປຶກສາກັບພະຍາບານສາທາລະນະສຸກ ຖ້າຫາກວ່າທ່ານມີຄວາມກັງວົນ
- ຄຳແນະນຳຂອງນັກໂພຊະນາການ

## ກວດສຸຂະພາບ ອາຍຸ 18 ເດືອນ

**ກວດຕອນໃດ?** ຫຼັງຈາກທີ່ລູກຂອງທ່ານໄດ້ອາຍຸ 18 ເດືອນ ແລະ ກ່ອນອາຍຸ 24 ເດືອນ

**ສິ່ງທີ່ຄາດຫວັງແມ່ນຫຍັງ?**
- ການກວດໂດຍທ່ານໝໍ
- ການກວດໂດຍໝໍແຂ້ວ
- ກວດເຊັກຄວາມສູງ ແລະ ນ້ຳໜັກ
- ຖ້າຫາກວ່າທ່ານມີຄວາມກັງວົນ, ໃຫ້ປຶກສາກັບພະຍາບານສາທາລະນະສຸກ



# ກວດສຸຂະພາບອາຍຸ 3 ປີ

**ກວດຕອນໃດ?** ຫຼັງຈາກທີ່ລູກຂອງທ່ານໄດ້ອາຍຸ 3 ປີ ແລະ ກ່ອນທີ່ຈະເປັນ 4 ປີ

**ສິ່ງທີ່ຄາດຫວັງແມ່ນຫຍັງ?**

- ການກວດໂດຍທ່ານໝໍ
- ການກວດໂດຍໝໍແຂ້ວ
- ກວດເຊັກຄວາມສູງ ແລະ ນ້ຳໜັກ
- ກວດຍ່ຽວ
- ການກວດການເບິ່ງເຫັນ ແລະ ການຟັງ
- ຖ້າຫາກວ່າທ່ານມີຄວາມກັງວົນ ແມ່ນກະລຸນາ ປຶກສາກັບພະຍາບານສາທາລະນະສຸກ, ນັກໂພຊະນາການ, ຫຼື ນັກຈິດຕະສາດ



- **ການກວດການເບິ່ງເຫັນ**
  ສາຍຕາສືບຕໍ່ພັດທະນາຈົນກ່ວາຮອດອາຍຸປະມານ6ປີ. ການກວດພົບ ແລະ ປິ່ນປົວໄວກ່ຽວກັບບັນຫາສາຍຕາ ຫຼື ຕາເລ່ ແມ່ນສາມາດປັບປຸງການພະຍາກອນພະຍາດໄດ້.
- **ການກວດການຟັງ**
  ການກວດນີ້ ແມ່ນຈະກວດເບິ່ງວ່າລູກຂອງທ່ານມີບັນຫາທາງດ້ານການໄດ້ຍິນ ແລະ/ຫຼື ພະຍາດຫູຫຼືບໍ່. ການກວດພົບໄວແມ່ນສຳຄັນ ເນື່ອງຈາກວ່າການໄດ້ຍິນມີຜົນກະທົບຕໍ່ພັດທະນາການດ້ານພາສາ.



- ☐ ການກວດສຸຂະພາບແຕ່ລະຄັ້ງສາມາດໃຊ້ໄດ້ສະເພາະ ເມື່ອລູກຂອງທ່ານຢູ່ໃນເກນອາຍຸທີ່ກຳນົດໄວ້ເທົ່ານັ້ນ.
- ☐ ທຸກໆການກວດເຊັກແມ່ນບໍ່ເສຍຄ່າ; ບໍ່ມີຄ່າທຳນຽມເພີ່ມເຕີມສຳລັບການປຶກສາ.
- ☐ ກະລຸນາຕິດຕໍ່ຫ້ອງການອຳນາດການປົກຄອງທ້ອງຖິ່ນຂອງທ່ານ ຖ້າຫາກວ່າທ່ານພາດວັນກວດສຸຂະພາບທີ່ກຳນົດ.

## ກວດສຸຂະພາບໃນການເຂົ້າໂຮງຮຽນ

**ກວດຕອນໃດ?**

ທ່ານຈະໄດ້ຮັບແຈ້ງການຈາກຄະນະບໍລິຫານການສຶກສາທ້ອງຖິ່ນໃນປະມານເດືອນກັນຍາຂອງປີດັ່ງກ່າວ ກ່ອນທີ່ຈະເລີ່ມເຂົ້າໂຮງຮຽນ, ເນື່ອງຈາກວ່າເດັກນ້ອຍເຂົ້າໂຮງຮຽນໃນເດືອນເມສາຫຼັງຈາກວັນເກີດຄົບຮອບ 6 ປີຂອງພວກເຂົາ.
(ກະລຸນາຮັບຊາບວ່າຕ້ອງຍື່ນໃບສະໝັກໃຫ້ຄະນະບໍລິຫານທ້ອງຖິ່ນເພື່ອເຂົ້າໂຮງຮຽນ ປະຖົມຂອງຍີ່ປຸ່ນ, ຖ້າຫາກວ່າເດັກບໍ່ມີສັນຊາດ ຫຼື ສັນຊາດຕ່າງປະເທດ.)

---

**ສິ່ງທີ່ຄາດຫວັງແມ່ນຫຍັງ?**

- ຈັດຂຶ້ນທີ່ໂຮງຮຽນປະຖົມທີ່ລູກຂອງທ່ານກຳລັງເຂົ້າ
- ການກວດໂດຍທ່ານໝໍ
- ການກວດໂດຍໝໍແຂ້ວ
- ກວດເຊັກຄວາມສູງ ແລະ ນ້ຳໜັກ
- ການກວດການເບິ່ງເຫັນ ແລະ ການຟັງ
- ການທົດສອບສະຕິປັນຍາແບບສັ້ນໆ

## ການເຂົ້າໂຮງຮຽນ

ຄະນະບໍລິຫານການສຶກສາທ້ອງຖິ່ນ ຫຼື ສູນການສຶກສາແມ່ນໄດ້ສະໜອງໃຫ້ຄຳປຶກສາສຳລັບເດັກພິການ ຫຼື ມີຄວາມກັງວົນກ່ຽວກັບຊີວິດຂອງໂຮງຮຽນປະຖົມ. ຄູສອນຂອງໂຮງຮຽນລ້ຽງເດັກ ຫຼື ອະນຸບານອາດຈະແນະນຳໃຫ້ທ່ານປຶກສາກັບຄະນະບໍລິຫານ.

ການປຶກສາການເຂົ້າໂຮງຮຽນແມ່ນໃຫ້ແຕ່ສະເພາະການນັດໝາຍເທົ່ານັ້ນ. ກະລຸນາຕິດຕໍ່ຄະນະບໍລິຫານສຶກສາທ້ອງຖິ່ນຂອງທ່ານເພື່ອນັດໝາຍ.

- **ການສຶກສາສຳລັບເດັກພິການ**

ຄະນະບໍລິຫານການສຶກສາຕັດສິນໃຈວ່າໂຮງຮຽນປະເພດໃດທີ່ເໝາະສົມທີ່ສຸດສຳລັບເດັກນ້ອຍໂດຍທີ່ໃຫ້ການເຄົາລົບຕໍ່ຄວາມປາດຖະໜາຂອງພໍ່ແມ່ ແລະ ເດັກ ຫຼາຍເທົ່າທີ່ເປັນໄປໄດ້.

ໂຮງຮຽນປະຖົມມີ **"ຫ້ອງຮຽນພິເສດ"** ສຳລັບເດັກນ້ອຍທີ່ມີຄວາມຕ້ອງການດ້ານການສຶກສາຕ່າງໆ ແລະ / ຫຼື **"ຫ້ອງຮຽນການສອນພິເສດ"**ບ່ອນທີ່ເດັກນ້ອຍໄດ້ຮັບຄຳແນະນຳພິເສດໃນຂະນະທີ່ລົງທະບຽນໃນຫ້ອງຮຽນປົກກະຕິ. ນອກນັ້ນຍັງມີ "ໂຮງຮຽນທີ່ໃຫ້ການຊ່ວຍເຫຼືອເປັນພິເສດ" ສຳລັບເດັກນ້ອຍພິການຮ້າຍແຮງ.

ທ່ານສາມາດໄປທັດສະນະສຶກສາໃນຫ້ອງຮຽນພິເສດ ຫຼື ໂຮງຮຽນສຳລັບການສຶກສາທີ່ມີຄວາມຕ້ອງການພິເສດໄດ້. ກະລຸນາຕິດຕໍ່ຄະນະບໍລິຫານການສຶກສາທ້ອງຖິ່ນຂອງທ່ານສຳລັບຂໍ້ມູນເພີ່ມເຕີມ.

# ທາງເລືອກການຮຽນສຳລັບເດັກນ້ອຍທີ່ມີ ຄວາມຕ້ອງການ ພິເສດ

## ໂຮງຮຽນປະຖົມ ແລະ ມັດທະຍົມຕົ້ນ

### ຫ້ອງຮຽນປົກກະຕິ

ເດັກນ້ອຍທີ່ມີຄວາມຕ້ອງການພິເສດແມ່ນຈະໄດ້ຮັບ ຄວາມສົນໃຈ ແລະ ການຊ່ວຍເຫຼືອເປັນພິເສດໃນສະຖານະຫຼັກ.

#### ຫ້ອງຮຽນການສອນພິເສດສຳລັບຄຳແນະນຳພິເສດ

ມີການໃຫ້ຄຳແນະນຳພິເສດສອງສາມຄັ້ງຕໍ່ອາທິດ ຫຼື ເດືອນໃນຫ້ອງຮຽນການສອນພິເສດ ໃນຂະນະທີ່ຫຼັກສູດສ່ວນທີ່ເຫຼືອແມ່ນຈະມີໃຫ້ຢູ່ໃນຫ້ອງຮຽນປົກກະຕິ.
ເດັກນ້ອຍສາມາດເຂົ້າຮຽນບົດຮຽນເປັນສ່ວນບຸກຄົນໄດ້ ເພື່ອຝຶກຝົນທັກສະດ້ານວິຊາການ ຫຼື ທັກສະໃນຊີວິດປະຈຳວັນ ສຳລັບການໃຊ້ຊີວິດປະຈຳວັນ.

### ຫ້ອງຮຽນພິເສດ

ຂະໜາດຫ້ອງຮຽນແມ່ນຂະໜາດນ້ອຍ.
ມີ 7
ປະເພດຕາມອີງຕາປະເພດຄວາມພິການຄື: ຄວາມພິການທາງສະຕິປັນຍາ, ຄວາມພິການທາງຮ່າງກາຍ, ຄວາມບົກຜ່ອງດ້ານສຸຂະພາບ, ສາຍຕາສັ້ນ, ຄວາມບົກພ່ອງທາງດ້ານການໄດ້ຍິນສຽງ, ຄວາມພິການທາງດ້ານການປາກເວົ້າ ແລະພາສາ, ອໍທິດສະຕິກ ແລະ ຄວາມຜິດປົກກະຕິທາງດ້ານອາລົມ. ປະເພດ ແລະ
ຈຳນວນຫ້ອງຮຽນແຕກຕ່າງກັນຕາມແຕ່ລະໂຮງຮຽນ.

**ໝາຍເຫດ:**
**ບໍ່ແມ່ນທຸກໆໂຮງຮຽນຈະມີລະບົບຫ້ອງຮຽນການສອນພິເສດ ຫຼື**
**ຫ້ອງຮຽນທີ່ໃຫ້ການຊ່ວຍເຫຼືອເປັນ ພິເສດ.**

## ໂຮງຮຽນສຳລັບການສຶກສາທີ່ມີຄວາມຕ້ອງການພິເສດ

ໂຮງຮຽນເຫຼົ່ານີ້ແມ່ນໂຮງຮຽນສຳລັບເດັກນ້ອຍທີ່ມີຄວາມບົກພ່ອງທາງສາຍຕາ, ຄວາມບົກພ່ອງທາງຫູ, ຄວາມພິການທາງດ້ານຮ່າງກາຍ, ຄວາມບົກຜ່ອງດ້ານສຸຂະພາບ, ຫຼື ຄວາມພິການທາງສະຕິປັນຍາ. ໂຮງຮຽນສຳລັບຄວາມພິການທາງສະຕິປັນຍາ ຍັງຮອງຮັບເດັກນ້ອຍທີເປັນໂລກ ອໍທິດສະຕິກ ສະເປັກຕຣຳ (ASD) ທີ່ມີໂລກຄວາມພິການທາງສະຕິປັນຍາຮ່ວມກັນ.

ຂະໜາດຂອງຫ້ອງຮຽນແມ່ນມີຂະໜາດນ້ອຍ, ແລະ ຫຼັກສູດໄດ້ຖືກອອກແບບສຳລັບຄວາມພິການຂອງແຕ່ລະຄົນ.

# ການນຳໃຊ້ການບໍລິການໃຫ້ຄຳປຶກສາ

## ເພື່ອປຶກສາກ່ຽວກັບພັດທະນາການຂອງລູກຂອງທ່ານ



ລັກສະນະບຸກຄະລິກກະພາບ ແລະ
ວິຖີການພັດທະນາແມ່ນຈະແຕກຕ່າງກັນໄປຕາມເດັກນ້ອຍແຕ່ລະຄົນ.
ມັນເປັນສິ່ງສຳຄັນທີ່ຈະຕ້ອງປຶກສາໄວໃນຕອນທີ່ທ່ານມີຄວາມກັງວົນໃຈເພາະວ່າເພື່ອວ່າທ່ານຈະສາມາດແກ້ໄຂ ບັນຫາໄດ້ຢ່າງຖືກຕ້ອງ.

- ສຳລັບຄວາມກັງວົນທີ່ກ່ຽວຂ້ອງກັບການລ້ຽງລູກ ແລະ/ຫຼື ພັດທະນາການຂອງລູກທ່ານ, ໃຫ້ປຶກສາພະຍາບານສາທາລະນະສຸກທີ່ເຮັດວຽກໃຫ້ອຳນາດການປົກຄອງທ້ອງຖິ່ນ.
- ຖ້າລູກຂອງທ່ານເຂົ້າໂຮງຮຽນລ້ຽງເດັກ ຫຼື ອະນຸບານ, ໃຫ້ປຶກສາກັບຄູສອນເປັນປະຈຳວ່າລາວເປັນແນວໃດຢູ່ໃນຫ້ອງຮຽນ.
- ອຳນາດການປົກຄອງທ້ອງຖິ່ນຂອງທ່ານອາດຈະໃຫ້ຄຳປຶກສາເປັນສ່ວນບຸກຄົນ ຫຼື ໃຫ້ຄຳປຶກສາຢູ່ພາກສະໜາມໃນບ່ອນຢູ່ໂຮງຮຽນລ້ຽງເດັກ ຫຼື ໂຮງຮຽນອະນຸບານຂອງລູກທ່ານ ໂດຍການສົ່ງທີ່ປຶກສາດ້ານພັດທະນາການໄປ.
- ອຳນາດການປົກຄອງທ້ອງຖິ່ນຂອງທ່ານອາດສະເໜີໃຫ້ມີການເຮັດເວີກຊ໋ອບເປັນກຸ່ມສຳລັບພໍ່ແມ່ ແລະ ລູກໆຂອງພວກເຂົາເພື່ອຮຽນຮູ້ວິທີການພົວພັນກັບລູກຂອງທ່ານໃນແບບທີ່ເໝາະສົມກັບໄລຍະການພັດ ທະນາຂອງເດັກ.

## ທາງເລືອກອື່ນໆໃນການໃຫ້ຄຳປຶກສາ

- ສະຖາບັນສາທາລະນະສຸກ, ສູນສາທາລະນະສຸກ
- ສູນຊ່ວຍເຫຼືອພັດທະນາການເດັກ
- ສູນຊ່ວຍເຫຼືອການລ້ຽງລູກ, ເຕົ້າໂຮມເດັກນ້ອຍ ແລະພໍ່ແມ່ (tsudoi-no hiroba)

ໝາຍເຫດ:
ລາຍລະອຽດຂອງການບໍລິການໃຫ້ປຶກສາແມ່ນແຕກຕ່າງກັນໄປຕາມແຕ່ລະອຳນາດການປົກຄອງທ້ອງຖິ່ນ. ກະລຸນາຕິດຕໍ່ພະຍາບານສາທາລະນະສຸກຢູ່ສະຖາບັນສາທາລະນະສຸກທ້ອງຖິ່ນຂອງທ່ານສຳລັບຂໍ້ມູນເພີ່ມເຕີມ.

# ທາງເລືອກການໃຫ້ຄຳປຶກສາຢູ່ບ່ອນທີ່ທ່ານອາໄສຢູ່

ແຕ່ລະອຳນາດການປົກຄອງທ້ອງຖິ່ນມີທາງເລືອກຕ່າງໆໃນການໃຫ້ຄຳປຶກສາ.
ກະລຸນາໃຊ້ບໍລິການເຫຼົ່ານັ້ນຖ້າທ່ານມີຄວາມກັງວົນກ່ຽວກັບລູກຂອງທ່ານ.

<table>
<tr><th rowspan="2">ສະຖາບັນ</th><th>ຜູ້ທີ່ມາປຶກສາທີ່ຕັ້ງໃຈ</th><th>ເວລາເປີດ</th><th>ໂທລະສັບ</th><th>ນາຍແປພາສາ</th></tr>
<tr><th colspan="4">ພື້ນທີ່ໃຫ້ຄຳປຶກສາ</th></tr>
<tr><td rowspan="2">[ຕົວຢ່າງ]<br>ສູນພັດທະນາເດັກເມືອງ<br>XYZ</td><td>ເດັກນ້ອຍຕ່ຳກວ່າ 18 ປີ<br>ແລະ ພໍ່ແມ່</td><td>ວັນຈັນ-ສຸກ, 9 ໂມງເຊົ້າ-5 ໂມງແລງ.<br>ປິດໃນວັນພັກລັດຖະການ</td><td>(04) 000-000</td><td>△ ໃຊ້ໄດ້ບາງສ່ວນ (ພາສາ)</td></tr>
<tr><td colspan="4">ຕົວຢ່າງ: ພັດທະນາການຂອງເດັກ, ການປະເມີນພັດທະນາການ, ການຖືພາ, ການເກີດລູກ, ການລ້ຽງລູກ</td></tr>
<tr><td rowspan="2"></td><td></td><td></td><td></td><td></td></tr>
<tr><td colspan="4"></td></tr>
<tr><td rowspan="2"></td><td></td><td></td><td></td><td></td></tr>
<tr><td colspan="4"></td></tr>
<tr><td rowspan="2"></td><td></td><td></td><td></td><td></td></tr>
<tr><td colspan="4"></td></tr>
<tr><td rowspan="2"></td><td></td><td></td><td></td><td></td></tr>
<tr><td colspan="4"></td></tr>
</table>

# ຄວາມຜິດປົກກະຕິທາງດ້ານພັດທະນາການແມ່ນຫຍັງ?

ຄວາມຜິດປົກກະຕິຂອງພັດທະນາການ (DDs) ແມ່ນມີລັກສະນະຂາດດຸນການພັດທະນາການເຮັດວຽກຂອງສະໝອງ ແລະ ໃນຫຼາຍໆກໍລະນີແມ່ນເປັນມາແຕ່ກໍາເນີດ. ມີຫຼາຍປະເພດທີ່ແຕກຕ່າງກັນໃນ DDs ດັ່ງທີ່ສະແດງຂ້າງລຸ່ມນີ້. ແມ້ແຕ່ຄົນທີ່ມີຄວາມຜິດປົກກະຕິດຽວກັນກໍ່ສະແດງອາການທີ່ແຕກຕ່າງກັນ. ມັນເປັນໄປໄດ້ທີ່ຈະມີຫຼາຍກວ່າໜຶ່ງປະເພດຂອງ DD.

ອາດຈະມີຄວາມລ່າຊ້າໃນພັດທະນາການດ້ານສະຕິປັນຍາ

**ຄວາມຜິດປົກກະຕິຂອງພັດທະນາການທີ່ແຜ່ລາມ (Autistic spectrum disorder; ASD)**

ອໍທິດສະຕິກ

ກຸ່ມອາການແອັສເພີເກີ້ (Asperger)

- ຄວາມລ່າຊ້າຂອງພາສາ (ບໍ່ສັງເກດເຫັນຢູ່ໃນກຸ່ມອາການແອັສເພີເກີ້)
- ຍາກໃນການສື່ສານ
- ບັນຫາໃນການພົວພັນທາງສັງຄົມ
- ພຶດຕິກໍາທີ່ເປັນພິທີກໍາ/ແບບນິໄສ, ຄວາມສົນໃຈທີ່ຈໍາກັດ, ຄວາມມັກໝຸ້ນ
- ຮູ້ສຶກອ່ອນໄຫວ ສູງຫຼາຍ- ຫຼື ຕໍ່າກວ່າ, ຄວາມເຊື່ອງຊ້າທາງຮ່າງກາຍ

**ໂລກສະມາທິສັ້ນ (ADHD)**

- ບໍ່ສາມາດໂຟກັດໄດ້
- ບໍ່ສາມາດທີ່ຈະຢູ່ໜຶ່ງໄດ້
- ພຶດຕິກໍາຄວບຄຸມອາລົມບໍ່ຢູ່ ີ່

**ຄວາມຜິດປົກກະຕິໃນການຮຽນຮູ້ (LD) (ຄວາມຜິດປົກກະຕິໃນການຮຽນຮູ້ສະເພາະ; SLD)**

- ຄວາມຫຍຸ້ງຍາກທີ່ໂດດເດັ່ນໃນທັງການອ່ານ, ຂຽນ, ຫຼື ການຄິດໄລ່

ໝາຍເຫດ: DDs ອື່ນໆປະກອບມີກຸ່ມອາການທູເລັດ (Tourette syndrome), ການເວົ້າຕິດອ່າງ, ແລະ ຄວາມຜິດປົກກະຕິການປະສານງານດ້ານພັດທະນາການ

**ຄໍານິຍາມຂອງຄວາມຜິດປົກກະຕິທາງດ້ານພັດທະນາການໃນກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ:**

"ຄວາມຜິດປົກກະຕິຂອງພັດທະນາການແມ່ນປະກອບມີການຂາດດຸນໃນການເຮັດວຽກຂອງສະໝອງ, ເຊັ່ນ: ໂລກອໍທິດສະຕິກ, ກຸ່ມອາການແອັສເພີເກີ້, ແລະ ຄວາມຜິດປົກກະຕິດ້ານພັດທະນາການທີ່ແຜ່ລາມອື່ນໆ, ຄວາມຜິດປົກກະຕິໃນການຮຽນຮູ້, ແລະ ໂລກສະມາທິສັ້ນ, ເຊິ່ງເລີ່ມຕົ້ນໃນໄວເດັກ". ຜູ້ທີ່ເປັນ DDs ແມ່ນຜູ້ທີ່ "ຖືກຈໍາກັດເນື່ອງຈາກ DDs ແລະອຸປະສັກທາງສັງຄົມໃນການດໍາລົງຊີວິດປະຈໍາວັນ ຫຼື ສັງຄົມຂອງພວກເຂົາ". ໝາຍເຫດ: ອີກວິທີໜຶ່ງເພື່ອກໍານົດ DDs ແມ່ນ ຄວາມຜິດປົກກະຕິທີ່ໃສ່ໝາຍເລກເປັນ F80-98 ໃນ ICD-10.

# ກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນທີ່ມີ ຄວາມຜິດປົກກະຕິທາງດ້ານພັດທະນາການ

ກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການແມ່ນເປັນກົດໝາຍຍີ່ປຸ່ນ ສ້າງຂຶ້ນເພື່ອຈຸດປະສົງໃຫ້ການຊ່ວຍເຫຼືອເດັກທີ່ເປັນ DDs (ໂດຍບໍ່ໄດ້ຄຳນຶງເຖິງອາຍຸຂອງພວກເຂົາ) ແລະ ຄອບຄົວຂອງພວກເຂົາ.

ກົດໝາຍດັ່ງກ່າວແມ່ນມີຈຸດປະສົງເພື່ອບັນລຸສັງຄົມທີ່ເດັກນ້ອຍທີ່ເປັນ DDs ສາມາດຮັບຮູ້ເຖິງສັກກະຍາພາບຂອງພວກເຂົາ ແລະ ຄອບຄົວສາມາດລ້ຽງດູພວກເຂົາໄດ້ດ້ວຍຄວາມຮູ້ສຶກທີ່ປອດໄພ.

# ສູນຊ່ວຍເຫຼືອສຳລັບຄົນທີ່ມີຄວາມຜິດປົກ ກະຕິ ທາງດ້ານພັດທະນາການ

ມີຫຼາຍອົງການຈັດຕັ້ງຕ່າງໆທີ່ໃຫ້ບໍລິການໃຫ້ຄຳປຶກສາສຳລັບຜູ້ທີ່ເປັນ DDs ແລະ ຄອບຄົວຂອງພວກເຂົາຢູ່ໃນປະເທດຍີ່ປຸ່ນ. ທຸກໆແຂວງ ແລະ ເມືອງທີ່ຖືກກຳນົດໂດຍກົດໝາຍ ມີສູນຊ່ວຍເຫຼືອຄົນພິການດ້ານພັດທະນາການ, ເຊິ່ງມີບົດບາດເປັນໃຈກາງໃນການສະໜອງຂໍ້ມູນ ແລະ ການຊ່ວຍເຫຼືອ.

ກະລຸນາເບິ່ງເວັບໄຊທ໌ຕໍ່ໄປນີ້ສຳລັບຂໍ້ມູນກ່ຽວກັບສູນຊ່ວຍເຫຼືອໃນທົ່ວປະເທດ:

**ສູນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອ ສຳລັບຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ**

https://www.rehab.go.jp/ddis/



**[ສູນຊ່ວຍເຫຼືອຄົນທີ່ເປັນ DDs ໃນເຂດຂອງທ່ານ]**

ຊື່ ແລະ ນາມສະກຸນ:

ຕິດຕໍ່:

# ການໄປພົບແພດ



## ການໄປພົບແພດ

ໃນປະເທດຍີ່ປຸ່ນ, ການວິນິດໄສຂອງ DDs ແມ່ນເຮັດໂດຍຜູ້ຊ່ຽວຊານເຊັ່ນ: ແພດເດັກ ຫຼື ຈິດຕະແພດເດັກ. ຖ້າທ່ານຕ້ອງການໄປພົບແພດ, ນີ້ແມ່ນເປັນຄວາມຄິດທີ່ດີທີ່ຄວນຈະ:

- ຂໍໃຫ້ພະຍາບານສາທາລະນະສຸກທ້ອງຖິ່ນຂອງທ່ານ ຫຼື ສູນຊ່ວຍເຫຼືອສໍາລັບຄົນທີ່ມີ DDs, ບ່ອນທີ່ທ່ານສາມາດຊອກຫາຜູ້ຊ່ຽວຊານດ້ານ DDs. (ກະລຸນາບັນທຶກໄວ້ວ່າໂຮງໝໍຫຼາຍໆແຫ່ງແມ່ນຈໍາເປັນຕ້ອງໄດ້ນັດໝາຍ.)
- ຖືເອົາບັດປະກັນສຸຂະພາບຂອງລູກທ່ານ ແລະ ປຶ້ມຄູ່ມືສຸຂະພາບແມ່ ແລະ ເດັກມານໍາເຈົ້າ ໃນເວລາໄປພົບແພດຄັ້ງທໍາອິດ.
- ຂຽນຄວາມກັງວົນຂອງທ່ານ ແລະ ລູກຂອງທ່ານເປັນແນວໃດເວລາຢູ່ເຮືອນ ແລະ/ຫຼື ລ້ຽງເດັກ ເພື່ອແບ່ງປັນໃຫ້ກັບທ່ານໝໍຊາບ.

## ການປະເມີນ ແລະ ການບໍາບັດ



ທ່ານໝໍອາດຕ້ອງການໃຫ້ລູກຂອງທ່ານທໍາການປະເມີນ ແລະ/ຫຼື ຮັບການປິ່ນປົວສ່ວນຕົວຈາກເຈົ້າໜ້າທີ່ຊ່ຽວຊານ. ການຕັດສິນໃຈແມ່ນຈະອີງໃສ່ຄວາມຕ້ອງການ ແລະເງື່ອນໄຂຂອງລູກທ່ານ.

ການປະເມີນປະກອບມີການທົດສອບຄວາມສະຫຼາດ/ພັດທະນາການ, ການກວດການຟັງ, ແລະ ຄື້ນໄຟຟ້າສະໝອງ. ການບໍາບັດສ່ວນບຸກຄົນປະກອບມີການບໍາບັດທາງດ້ານຮ່າງກາຍ, ອະຊີວະບໍາບັດ, ການບໍາບັດການປາກເວົ້າ/ການໄດ້ຍິນ, ແລະການບໍາບັດດ້ວຍທາງຈິດ.

## ຖ້າລູກຂອງທ່ານຖືກກວດພົບວ່າເປັນ DD...

ມັນອາດຈະເປັນເລື່ອງກັງວົນຫຼາຍເພື່ອຈະຮູ້ວ່າລູກຂອງທ່ານເປັນ DD ຫຼືບໍ່. ຢ່າງໃດກໍ່ຕາມ, ຜົນໄດ້ຮັບທາງດ້ານພັດທະນາການຂອງລາວສາມາດໄດ້ຮັບຜົນກະທົບໃນທາງບວກໂດຍການປັບສະພາບແວດລ້ອມ ແລະ ການພົວພັນຂອງທ່ານກັບລາວ. ກະລຸນາປຶກສາຫາລື ແລະ ຊອກຫາສິ່ງທີ່ເໝາະສໍາລັບລູກຂອງທ່ານ ກັບທ່ານໝໍ ແລະ ເຈົ້າໜ້າທີ່ຊ່ຽວຊານ.

# ການໃຊ້ຢາ

ທ່ານໝໍອາດຈະແນະນຳໃຫ້ລູກຂອງທ່ານກິນຢາເພື່ອຊ່ວຍໃຫ້ເຂົາຮູ້ສຶກສະບາຍຫຼາຍຂຶ້ນ. ປຶກສາຫາລືກ່ຽວກັບຜົນກະທົບ ແລະ ຜົນຂ້າງຄຽງຂອງຢາທີ່ແນະນຳ.

ຢາບໍ່ໄດ້ປິ່ນປົວ DDs, ແຕ່ມັນສາມາດບັນເທົາອາການບາງຢ່າງທີ່ພົບທົ່ວໄປໃນເດັກນ້ອຍທີ່ເປັນ DDs.

**[ຢາທີ່ໃຊ້ເລື້ອຍໆ]**

- ຢາກະຕຸ້ນລະບົບປະສາດສ່ວນກາງ: ຊ່ວຍຫຼຸດຜ່ອນສະມາທິສັ້ນ, ຄວາມບໍ່ຕັ້ງໃຈ, ແລະ ຄວາມບໍ່ຢູ່ບໍ່ເຊົາຂາດສະມາທິຂອງ ADHD
- ຢາຕ້ານຄວາມວິຕົກກັງວົນ: ຜ່ອນຄາຍຄວາມວິຕົກກັງວົນ ແລະ ຄວາມຮູ້ສຶກທີ່ບໍ່ສະບາຍອື່ນໆ
- ຢາຕ້ານພະຍາດໂລກຈິດ: ບັນເທົາອາການປັ່ນປ່ວນ ແລະ ການກະທຳທີ່ຂາດສະຕິຢ່າງຮຸນແຮງ
- ຢາກັນໂລກຊັກ: ຊ່ວຍຄວບຄຸມອາການຊັກບ້າໝູ
- ຢານອນຫຼັບ: ສ້າງນິໄສການນອນທີ່ມີສຸຂະພາບດີ

ຢາແມ່ນສາມາດຊ່ວຍໃຫ້ລູກຂອງທ່ານໃຊ້ຊີວິດໄດ້ຢ່າງສະດວກສະບາຍຂຶ້ນດ້ວຍການບັນເທົາອາການຕ່າງໆ. ຕ້ອງປະຕິບັດຕາມຄວາມຖີ່ ແລະ ປະລິມານທີ່ແນະນຳຢ່າງຄັດ

☆ ກະລຸນາຢ່າລັງເລທີ່ຈະຖາມທ່ານໝໍ ຫຼື ເຈົ້າໜ້າທີ່ຊ່ຽວຊານ ຖ້າທ່ານບໍ່ແນ່ໃຈກ່ຽວກັບຄຳອະທິບາຍຂອງພວກເຂົາ.

☆ ທ່ານຍັງສາມາດຂໍຄຳແນະນຳຈາກພະຍາບານສາທາລະນະສຸກ ແລະ ຄູລ້ຽງເດັກ ຫຼື ອະນຸບານໄດ້. ແບ່ງປັນ ແລະ ປຶກສາຫາລືຢ່າງເປັນປົກກະຕິວ່າລູກຂອງທ່ານເປັນແນວໃດ ເພື່ອໃຫ້ທ່ານສາມາດຕິດຕາມລູກຂອງທ່ານຮ່ວມກັນກັບພວກເຂົາໄດ້.

# ໃບຢັ້ງຢືນສຳລັບຄົນພິການ

## ເພື່ອຮຽນຮູ້ກ່ຽວກັບໃບຢັ້ງຢືນຄວາມພິການ

ການມີໃບຢັ້ງຢືນສຳລັບຄົນພິການ ແມ່ນອະນຸຍາດໃຫ້ສາມາດເຂົ້າເຖິງການບໍລິການສະຫວັດດີການ ແລະ ເງິນອຸດໜູນຕ່າງໆ ຂຶ້ນກັບປະເພດ ແລະ ຄວາມຮຸນແຮງຂອງຄວາມພິການ.
ທ່ານຕ້ອງໄດ້ຮັບໃບຢັ້ງຢືນຈາກຫ້ອງການອຳນາດການປົກຄອງທ້ອງຖິ່ນຂອງທ່ານ.

ມີ 3 ປະເພດຂອງໃບຢັ້ງຢືນທີ່ສອດຄ່ອງກັບປະເພດຂອງຄວາມພິການ:
ໃບຢັ້ງຢືນຄວາມພິການທາງສະຕິປັນຍາ (ໃບຢັ້ງຢືນການຟື້ນຟູ), ໃບຢັ້ງຢືນຄວາມພິການທາງຈິດ, ແລະ ໃບຢັ້ງຢືນຄວາມພິການທາງຮ່າງກາຍ.

- ☐ ການມີໃບຢັ້ງຢືນເຮັດໃຫ້ຂັ້ນຕອນການຮັບການບໍລິການສະຫວັດດີການງ່າຍຂຶ້ນ.
- ☐ <u>ຈຳນວນເງິນອຸດໜູນແມ່ນຂຶ້ນກັບປະເພດ ແລະ ຄວາມຮຸນແຮງຂອງຄວາມພິການ.</u>
- ☐ <u>ການບໍລິການສະຫວັດດີການສ່ວນບຸກຄົນ, ເຊັ່ນ: ການມີສິດໄດ້ຮັບມີຄວາມແຕກຕ່າງກັນຕາມແຕ່ລະອຳນາດການປົກຄອງທ້ອງຖິ່ນ.</u>

ສຳລັບຂໍ້ມູນເພີ່ມເຕີມ,
ກະລຸນາຕິດຕໍ່ພະແນກອຳນາດການປົກຄອງທ້ອງຖິ່ນທີ່ຮັບຜິດຊອບສະຫວັດດີການ.

[ຕົວຢ່າງຂອງສິດທິປະໂຫຍດ]

- ເງິນອຸດໜູນ
- ການຈ່າຍຄືນຄ່າປິ່ນປົວບາງສ່ວນ
- ການຫຼຸດຜ່ອນພາສີ
- ສ່ວນຫຼຸດລາຄາລົດໄຟ, ລົດເມ ແລະ ຄ່າປີ້ຍົນພາຍໃນປະເທດ
- ສ່ວນຫຼຸດເສຍຄ່າທຳນຽມທາງ

…ແລະ ອື່ນໆອີກຫຼາຍຢ່າງ

# ໃບຢັ້ງຢືນຄວາມພິການທາງສະຕິປັນຍາ



**ແມ່ນໃຜທີ່ມີສິດໄດ້ຮັບ**

- ບຸກຄົນທີ່ມີຄວາມພິການທາງສະຕິປັນຍາ
- ບຸກຄົນທີ່ເປັນທັງ DD ແລະ ພິການທາງສະຕິປັນຍາ

**ວິທີສະໝັກ**

- ເຮັດການທົດສອບການປະເມີນ ເພື່ອກໍານົດຄວາມຮຸນແຮງຢູ່ສູນໃຫ້ຄໍາປຶກສາກ່ຽວກັບເດັກ
  ສໍາລັບຜູ້ມີອາຍຸຕໍ່າກວ່າ 18 ປີ, ແລະ
  ຢູ່ສູນໃຫ້ຄໍາປຶກສາການຟື້ນຟູສໍາລັບຄົນພິການທາງສະຕິປັນຍາ ສໍາລັບຜູ້ທີ່ມີອາຍຸ 18 ປີຂຶ້ນໄປ.

**ໝາຍເຫດ:**
ເນື່ອງຈາກຄວາມຮຸນແຮງຂອງຄວາມພິການທາງສະຕິປັນຍາຂອງຄົນຜູ້ໜຶ່ງອາດມີການປ່ຽນແປງຕາມການເວລາ,
ມັນຈໍາເປັນຕ້ອງໄດ້ປະເມີນຄວາມຮຸນແຮງຄືນໃໝ່ໃນຊ່ວງເວລາໃດໜຶ່ງທີ່ກໍານົດໂດຍແຕ່ລະແຂວງ.

# ໃບຢັ້ງຢືນຄວາມພິການທາງຈິດ

**ແມ່ນໃຜທີ່ມີສິດໄດ້ຮັບ**

- ບຸກຄົນທີ່ຕ້ອງການການຊ່ວຍເຫຼືອໃນການດໍາລົງຊີວິດຍ້ອນຄວາມພິການທາງຈິດເຊັ່ນ:
  - ຄວາມຜິດປົກກະຕິທາງດ້ານພັດທະນາການ - ໂລກຈິດເຊື່ອມ
  - ຄວາມຜິດປົກກະຕິທາງອາລົມ (ເຊັ່ນ: ຊຶມເສົ້າ, ຄວາມຜິດປົກກະຕິສອງອາລົມ)
  - ໂລກລົມບ້າໝູ - ຕິດຢາເສບຕິດ
  -ການເຮັດວຽກຜິດປົກກະຕິຂອງສະໝອງຂັ້ນສູງ
  - ຄວາມຜິດປົກກະຕິທາງຈິດໃຈອື່ນໆ (ເຊັ່ນ: ຄວາມພິການທີ່ກ່ຽວຂ້ອງກັບຄວາມຄຽດ)

**ວິທີສະໝັກ**

- ໄປຫາພະແນກສະຫວັດດີການຢູ່ຫ້ອງການອໍານາດການປົກຄອງທ້ອງຖິ່ນ
- ຈົ່ງຖືເອກະສານດັ່ງຕໍ່ໄປນີ້ມານໍາທ່ານ:
  1) ໃບຢັ້ງຢືນການແພດ (ຫຼື ໃບຢັ້ງຢືນຜູ້ຮັບເງິນບໍານານຄົນພິການ ຖ້າມີ)
  2) ຮູບພາບຂອງຜູ້ສະໝັກ
- ຕື່ມແບບຟອມສະໝັກ (ມີຢູ່ເຄົາເຕີ)

**ໝາຍເຫດ:** ໃບຢັ້ງຢືນຕ້ອງໄດ້ຮັບການຕໍ່ອາຍຸໃໝ່ທຸກໆສອງປີ.
ກະລຸນາກະກຽມໃບຢັ້ງຢືນການແພດລ່າສຸດສໍາລັບການຕໍ່ອາຍຸໃໝ່ໃນແຕ່ລະຄັ້ງ.

# ຂໍ້ມູນເພີ່ມເຕີມ

ໂຮງໝໍ ແລະ ອົງການທີ່ປຶກສາບາງແຫ່ງມີພະນັກງານທີ່ເວົ້າພາສາຕ່າງປະເທດໄດ້ ຫຼື ນຳໃຊ້ແອັບແປພາສາເພື່ອຮອງຮັບຄອບຄົວທີ່ມີພື້ນຖານຕ່າງປະເທດ.
ອາດຈະມີການບໍລິການພາກລັດໃນການຈັດຫານາຍແປພາສາ.

## ການໃຫ້ຄຳປຶກສາເປັນພາສາຕ່າງປະເທດ

ການບໍລິການໃຫ້ຄຳປຶກສາທາງໂທລະສັບຕ່າງໆແມ່ນມີໃຫ້ແກ່ຊາວຕ່າງປະເທດ. ເຖິງແມ່ນວ່າພວກເຂົາຈະບໍ່ໄດ້ຊ່ຽວຊານໃນ DDs, ແຕ່ວ່າພວກເຂົາສາມາດໃຫ້ຄຳແນະນຳກ່ຽວກັບສະຖາບັນການແພດທີ່ມີພະນັກງານທີ່ເວົ້າພາສາຕ່າງປະເທດ ແລະ ວິທີການຊອກຫານາຍແປພາສາຂອງທ່ານ.

### ◆ ປະຕູຊ່ວຍເຫຼືອຊີວິດປະຈຳວັນສຳລັບຄົນຕ່າງປະເທດ

ປະຕູນີ້ປະກອບດ້ວຍຂໍ້ມູນທີ່ຫຼາກຫຼາຍ
ເພື່ອແກ້ໄຂຄວາມຕ້ອງການທີ່ແຕກຕ່າງກັນທີ່ທ່ານມີແນວໂນ້ມທີ່ຈະມີໃນຂະນະທີ່ອາໄສຢູ່ໃນປະເທດຍີ່ປຸ່ນ.
ທ່ານສາມາດຊອກຫາການບໍລິການໃຫ້ຄຳປຶກສາໃນເຂດຂອງທ່ານໄດ້.
http://www.moj.go.jp/isa/support/portal/index.html

### ◆ ສູນຂໍ້ມູນຂ່າວສານທາງການແພດສາກົນ AMDA

ນີ້ແມ່ນການບໍລິການຂໍ້ມູນຂ່າວສານທາງໂທລະສັບສຳລັບຊາວຕ່າງຊາດທີ່ສະໜອງຂໍ້ມູນກ່ຽວກັບສະຖານທີ່ທາງການແພດທີ່ທ່ານສາມາດໄປພົບແພດໄດ້ໃນພາສາບ້ານເກີດຂອງທ່ານ ແລະ ກ່ຽວກັບລະບົບສະຫວັດດີການທາງການແພດ. ຜູ້ປະຕິບັດການເວົ້າພາສາຍີ່ປຸ່ນງ່າຍໆ (ເຂົ້າໃຈງ່າຍ).

**ຫ້ອງການໂຕກຽວ**
**ໂທລະສັບ: 03-6233-9266 (ວັນຈັນ-ວັນສຸກ, 10:00-15:00)**
https://www.amdamedicalcenter.com/

# ແອັບແປພາສາ

◆ **VoiceTra ໂດຍສະຖາບັນຂໍ້ມູນຂ່າວສານ ແລະ ການສື່ສານແຫ່ງຊາດ**

ອັນນີ້ແມ່ນເປັນ app ການແປພາສາພາສາຍີ່ປຸ່ນສໍາລັບ 31 ພາສາ.
ທ່ານສາມາດດາວໂຫລດ ແລະ ໃຊ້ app ນີ້ໂດຍບໍ່ເສຍຄ່າ.

http://voicetra.nict.go.jp/






# ຂໍ້ມູນຂ່າວສານກ່ຽວກັບການສຶກສາຂອງໂຮງຮຽນ

## ◆ ເວັບໄຊທ໌ຂໍ້ມູນຂ່າວສານໂດຍ MEXT

○ **ເຄຼຣີເນັດ (CLARINET) (ພາສາຍີ່ປຸ່ນ)**
ສະໜອງຂໍ້ມູນດ້ານການສຶກສາສໍາລັບເດັກນ້ອຍຍີ່ປຸ່ນທີ່ອາໄສຢູ່ຕ່າງປະເທດ, ຄົນຍີ່ປຸ່ນທີ່ກັບຄືນຈາກຕ່າງປະເທດ, ແລະ ຜູ້ທີ່ມີພື້ນຖານມາຈາກຕ່າງປະເທດ.
https://www.mext.go.jp/a_menu/shotou/clarinet/main7_a2.htm

○ **ເຄສະຕາ-ເນັດ (CASTA-NET) (ພາສາຍີ່ປຸ່ນ)**
ເວັບໄຊທ໌ຄົ້ນຫາຂໍ້ມູນການສຶກສາສໍາລັບຈຸດປະສົງສະໜັບສະໜູນການຮຽນຮູ້ຂອງຜູ້ທີ່ກັບຄືນປະເທດ
ແລະ ນັກສຶກສາຕ່າງປະເທດ.
https://casta-net.mext.go.jp/

○ **ໂຄງການ MUSE (ຊ່ວຍເຫຼືອຫຼາຍພາສາສໍາລັບການສຶກສາ) (ພາສາຍີ່ປຸ່ນ)**
ສະໜອງແຫຼ່ງທຶນເພື່ອສ້າງສື່ອຸປະກອນຫຼາຍພາສາ ເພື່ອຈຸດປະສົງເຊື່ອມຕໍ່ໂຮງຮຽນ ແລະ ຄອບຄົວທີ່ມີພື້ນຖານຕ່າງປະເທດ.
https://data.casta-net.mext.go.jp/tagengo-gakko.jp/index.html

# ຂໍ້ມູນຂ່າວສານກ່ຽວກັບຄວາມຜິດປົກກະຕິທາງດ້ານພັດທະນາການ

○ **ຂໍ້ມູນຂ່າວສານ ແລະ ສູນການຊ່ວຍເຫຼືອຄົນພິການທາງດ້ານພັດທະນາການ (ພາສາຍີ່ປຸ່ນ)**
ສະໜອງຂໍ້ມູນຫຼ້າສຸດກ່ຽວກັບ DDs, ຄຸນລັກສະນະ ແລະ ກົນລະຍຸດ ທີ່ຈະຈັດການກັບພວກເຂົາ, ລະບົບການຊ່ວຍເຫຼືອສໍາລັບບຸກຄົນທີ່ເປັນ DDs, ແລະ ແນວໂນ້ມ ພາຍໃນ ແລະ ທົ່ວໂລກ.
https://www.rehab.go.jp/ddis/

○ **ສູນສົ່ງເສີມການສຶກສາສໍາລັບຄົນພິການດ້ານການພັດທະນາ (ພາສາຍີ່ປຸ່ນ)**
ສະໜອງໃຫ້ຂໍ້ມູນກ່ຽວກັບຍຸດທະສາດການສອນ, ວັດສະດຸ, ແລະ ສື່ອຸປະກອນຊ່ວຍເຫຼືອສໍາລັບເດັກນ້ອຍທີ່ເປັນ DDs, ການຄົ້ນຄວ້າກ່ຽວກັບ DDs, ການບັນຍາຍວິດີໂອສໍາລັບຄູສອນ, ແລະ ນະໂຍບາຍ ແລະ ລະບຽບການຂອງອໍານາດການປົກຄອງທີ່ກ່ຽວຂ້ອງ.
http://icedd_new.nise.go.jp/

# ຄຳສັບພາສາລາວ-ຍີ່ປຸ່ນ

| | ພາສາລາວ | ວິທີອ່ານພາສາຍີ່ປຸ່ນ | ພາສາຍີ່ປຸ່ນທີ່ຂຽນພູລີວະນະໃສ່ນຳ |
|---|---|---|---|
| | ກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ | Hattatsu shōgai sha shien hō | 発達障害者支援法 |
| | ໂລກສະມາທິສັ້ນ(ADHD) | Chūi kekkan tadōsē shōgai/ADHD | 注意欠陥多動性障害／ADHD |
| | ເງິນອຸດໜູນ | Teate | 手当 |
| | ຢາຕ້ານຄວາມວິຕົກກັງວົນ | Kō fuan yaku | 抗不安薬 |
| | ຢາກັນຊັກ | Kō tenkan yaku | 抗てんかん薬 |
| | ຢາຕ້ານພະຍາດໂລກຈິດ | Kō seishinbyō yaku | 抗精神病薬 |
| | ການນັດໝາຍ | Yoyaku | 予約 |
| | ການປະເມີນ | Kensa | 検査 |
| | ການກວດການຟັງ | Chōkaku kensa | 聴覚検査 |
| | ໂລກ ອໍທິດສະຕິກ ສະເປັກຕຣຳ (ASD) | Jiheishō/ASD | 自閉症／ASD |
| | ກວດສຸຂະພາບເດັກອ່ອນ(ກວດສຸຂະພາບ) | Nyūyōji kenkō shinsa (kenshin) | 乳幼児健康診査（健診） |
| | ຄວາມຜິດປົກກະຕິສອງອາລົມ | Sōkyokusē shōgai | 双極性障害 |
| | ຄະນະບໍລິຫານການສຶກສາ | Kyōiku iinkai | 教育委員会 |
| | ຢາກະຕຸ້ນລະບົບປະສາດສ່ວນກາງ | Chūsū shinkei shigeki yaku | 中枢神経刺激薬 |
| | ໃບຢັ້ງຢືນສຳລັບຄົນພິການ | Shōgaisha techō | 障害者手帳 |
| | ສູນໃຫ້ຄຳປຶກສາກ່ຽວກັບເດັກ | Jidō sōdanjo | 児童相談所 |
| | ຈິດຕະແພດເດັກ | Jidō seishinkai | 児童精神科医 |
| | ການໃຫ້ຄຳປຶກສາ | Sōdan | 相談 |
| | ໝໍແຂ້ວ | Shikaishi/haisha | 歯科医師／歯医者 |
| | ຊຶມເສົ້າ | Utsu | うつ |
| | ພັດທະນາການ | Hattatsu | 発達 |
| | ຄວາມຜິດປົກກະຕິການປະສານງານດ້ານພັດທະນາການ | Hattatsu sē kyōchō undō shōgai | 発達性協調運動障害 |
| | ຄວາມຜິດປົກກະຕິທາງດ້ານພັດທະນາການ | Hattatsu shōgai | 発達障害 |
| | ການທົດສອບພັດທະນາການ | Hattatsu kensa | 発達検査 |
| | ການວິນິດໄສ | Shindan | 診断 |
| | ຄວາມພິການ | Shōgai | 障害 |
| | ເງິນບຳນານຄົນພິການ | Shōgai nenkin | 障害年金 |
| | ທ່ານໝໍ (ແພດ) | Ishi/isha | 医師／医者 |
| | ຕິດຢາເສບຕິດ | Yakubutsu izon shō | 薬物依存症 |
| | ສູນການສຶກສາ | Kyōiku sentā | 教育センター |
| | ປະສິດທິຜົນ | Kōka/sayō | 効果／作用 |

| | | | |
|---|---|---|---|
| | ກວດສຸຂະພາບເດັກອາຍຸ 1ປີ 6ເດືອນ (ກວດສຸຂະພາບ) | Issai rokkagetsuji kenkō shinsa (kenshin) | 1歳6 か月児健康診査（健診） |
| | ກວດຄື້ນສະໝອງ | Nōha kensa | 脳波検査 |
| | ໂຮງຮຽນປະຖົມ | Shōgakkō | 小学校 |
| | ຄວາມຜິດປົກກະຕິທາງຈິດ | Jōcho shōgai | 情緒障害 |
| | ການບັດໝາຍ | Tenkan | てんかん |
| | ກວດສຸຂະພາບໃນການເຂົ້າໂຮງຮຽນ | Shūgakuji kenkō shindan | 就学時健康診断 |
| | ຄວາມບົກຜ່ອງດ້ານສຸຂະພາບ | Byōjaku／Shintai kyojaku | 病弱／身体虚弱 |
| | ບັດປະກັນສຸຂະພາບ | Hoken shō | 保険証 |
| | ຄວາມບົກພ່ອງທາງດ້ານການໄດ້ຍິນສຽງ | Nanchō | 難聴 |
| | ການເຮັດວຽກຜິດປົກກະຕິຂອງສະໝອງຂັ້ນສູງ | Kōjinō kinō shōgai | 高次脳機能障害 |
| | ໂຮງໝໍ | Byōin | 病院 |
| | ໃຫ້ຄໍາປຶກສາເປັນສ່ວນບຸກຄົນ | Kobetsu sōdan | 個別相談 |
| | ການກວດສຸຂະພາບເດັກ | Nyūji kenshin | 乳児健診 |
| | ສູນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອ ສໍາລັບບຸກຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ | Hattatsu shōgai jōhō shien sentā | 発達障害情報・支援センター |
| | ໃບຢັ້ງຢືນຄວາມພິການທາງສະຕິປັນຍາ (ໃບຢັ້ງຢືນການຟື້ນຟູ) | Ryōiku techō | 療育手帳 |
| | ຄວາມພິການທາງສະຕິປັນຍາ | Chiteki shōgai | 知的障害 |
| | ການທົດສອບສະຕິປັນຍາ | Chinō kensa | 知能検査 |
| | ມັດທະຍົມຕົ້ນ | Chūgakkō | 中学校 |
| | ອະນຸບານ | Yōchien | 幼稚園 |
| | ຄວາມຜິດປົກກະຕິໃນການຮຽນຮູ້ | Gakushū shōgai/LD | 学習障害／LD |
| | ສາຍຕາສັ້ນ | Jakushi | 弱視 |
| | ປື້ມຄູ່ມືສຸຂະພາບແມ່ ແລະ ເດັກ | Boshi kenkō techō ( Boshi techō) | 母子健康手帳(母子手帳) |
| | ໃບຢັ້ງຢືນການແພດ | Shindansho | 診断書 |
| | ຢາ | Kusuri | 薬 |
| | ໃບຢັ້ງຢືນຄວາມພິການທາງຈິດ | Seishin shōgaisha hoken fukushi techō | 精神障害者保健福祉手帳 |
| | ຄວາມຜິດປົກກະຕິທາງອາລົມ | Kibun shōgai | 気分障害 |
| | ນັກໂພຊະນາການ | Eiyōshi | 栄養士 |
| | ອະຊີວະບໍາບັດ | Sagyō ryōhō | 作業療法 |
| | ໃຫ້ຄໍາປຶກສາຢູ່ພາກສະໜາມ | Junkai sōdan | 巡回相談 |
| | ສູນຊ່ວຍເຫຼືອການລ້ຽງລູກ | Kosodate shien sentā | 子育て支援センター |
| | ແພດເດັກ | Shōnikai | 小児科医 |
| | ຄວາມພິການທາງຮ່າງກາຍ | Shitai fujiyū/shintai shōgai | 肢体不自由／身体障害 |
| | ໃບຢັ້ງຢືນຄວາມພິການທາງຮ່າງກາຍ | Shintai shōgaisha techō | 身体障害者手帳 |
| | ການບໍາບັດທາງດ້ານຮ່າງກາຍ | Rigaku ryōhō | 理学療法 |
| | ລ້ຽງເດັກ | Hoikuen | 保育園 |
| | ຄູລ້ຽງເດັກ | Hoikushi | 保育士 |

| | | | |
|---|---|---|---|
| | ສູນສົ່ງເສີມການສຶກສາສຳລັບຄົນພິການດ້ານການພັດທະນາ | Hattatsu shōgai kyōiku suishin sentā | 発達障害教育推進センター |
| | ນັກຈິດຕະສາດ | Shinrishi | 心理士 |
| | ຈິດບຳບັດ | Shinri ryōhō | 心理療法 |
| | ພະຍາບານສາທາລະນະສຸກ | Hokenshi | 保健師 |
| | ສູນສາທາລະນະສຸກ | Hoken sentā | 保健センター |
| | ສູນໃຫ້ຄຳປຶກສາການຟື້ນຟູສຳລັບຄົນພິການທາງສະຕິປັນຍາ | Chiteki shōgaisha kōsei sōdanjo | 知的障害者更生相談所 |
| | ຫ້ອງຮຽນການສອນພິເສດ | Tsūkyū shidō kyōshitsu | 通級指導教室 |
| | ຫ້ອງຮຽນປົກກະຕິ | Tsūjō gakkyū | 通常学級 |
| | ໂລກຈິດເຊື່ອມ | Tōgō shicchō shō | 統合失調症 |
| | ການປຶກສາການເຂົ້າໂຮງຮຽນ | Shūgaku sōdan | 就学相談 |
| | ໂຮງຮຽນທີ່ໃຫ້ການຊ່ວຍເຫຼືອເປັນພິເສດ | Tokubetsu shien gakkō | 特別支援学校 |
| | ຜົນຂ້າງຄຽງ | Fuku sayō | 副作用 |
| | ຢານອນຫຼັບ | Suimin yaku | 睡眠薬 |
| | ເຈົ້າໜ້າທີ່ຊ່ຽວຊານ | Senmon sutaffu | 専門スタッフ |
| | ຫ້ອງຮຽນທີ່ໃຫ້ການຊ່ວຍເຫຼືອເປັນພິເສດ | Tokubetsu shien gakkyū | 特別支援学級 |
| | ຄວາມພິການທາງດ້ານການປາກເວົ້າ<br>ແລະພາສາ | Gengo shōgai | 言語障害 |
| | ການບຳບັດການປາກເວົ້າ/ການໄດ້ຍິນ | Gengo chōkaku ryōhō | 言語聴覚療法 |
| | ຄວາມພິການທີ່ກ່ຽວຂ້ອງກັບຄວາມຄຽດ | Sutoresu sē shōgai | ストレス性障害 |
| | ການເວົ້າຕິດອ່າງ | Kitsuon | 吃音 |
| | ສູນການຊ່ວຍເຫຼືອຄົນພິການທາງດ້ານພັດທະນາການ | Hattatsu shōgai sha shien sentā | 発達障害者支援センター |
| | ສູນຊ່ວຍເຫຼືອພັດທະນາການເດັກ | Kodomo hattatsu shien sentā | こども発達支援センター |
| | ກວດສຸຂະພາບອາຍຸ 3 ປີ | Sansai ji kenkō shinsa（kenshin） | 3歳児健康診査（健診） |
| | ກຸ່ມອາການທູເລັດ | Turetto shōkōgun | トゥレット症候群 |
| | ນາຍແປພາສາ | Tsūyaku | 通訳 |
| | ການກວດການເບິ່ງເຫັນ | Shikaku kensa | 視覚検査 |
| | ການບໍລິການສະຫວັດດີການ | Fukushi sābisu | 福祉サービス |

MEMO

## ທ່ານມີຄວາມກັງວົນກ່ຽວກັບພັດທະນາການຂອງລູກທ່ານບໍ່?
## ~ສໍາລັບພໍ່ແມ່ທີ່ລ້ຽງລູກໃນປະເທດຍີ່ປຸ່ນ~ 〔Lao〕


**ສະບັບ**

ເດືອນພະຈິກ 2023 / ເດືອນມີນາ 2025: ການປັບປຸງການອອກແບບ

**ຫົວໜ້າບັນນາທິການ**

ດຣ. Osamu Takahashi, ປະທານສະພາບໍລິຫານ, ບໍລິສັດສະຫວັດດີການສັງຄົມເທດສະບານໂຕໂຍຕ້າ

**ຜູ້ຮ່ວມມື**

ຫ້ອງປຶກສາການແຊກແຊງຊຸມຊົນ, ສູນພັດທະນາການເດັກໂຕໂຍຕ້າ

**ບັນນາທິການ ແລະ ຜູ້ຜະລິດ**

ຄະນະປະຕິບັດວຽກງານກ່ຽວກັບການພັດທະນາໂບຊົວຫຼາຍພາສາ ແລະ ສື່ອຸປະກອນອື່ນໆ
ເພື່ອຊ່ວຍເດັກທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ
(ກອງປະຊຸມການວິເຄາະຂໍ້ມູນຂ່າວສານຂອງຄວາມຜິດປົກກະຕິທາງດ້ານພັດທະນາການ)

**ຜູ້ຈັດພິມ**

ສູນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອສໍາລັບຄົນທີ່ມີຄວາມຜິດປົກກະຕິທາງດ້ານພັດທະນາການ
ພະແນກແຜນການ ແລະ ຂໍ້ມູນຂ່າວສານ, ສູນຟື້ນຟູຄົນພິການແຫ່ງຊາດ
ທີ່ຢູ່: 4-1 ນາມິກິ,ໂຕໂກະຊາວາ-ຊິ, ໄຊຕະມະ 359-8555, ຍີ່ປຸ່ນ
ເວັບໄຊທ໌: https://www.rehab.go.jp/ddis/

Design and illustration Kuu Kusuhara
Design cooperation Simple Communication Association (General Incorporated Association)

イラスト・デザイン　くすはらくう
デザイン協力　一般社団法人やさしいコミュニケーション協会

The design and illustration of this booklet were funded by:
Health Labour Science Public Administration Research Project Grant, *Shogaisha sogo hukushiho-no taisho hani-no kento-to shogai hukushi keikaku-no sakusei-ni muketa deta rikatsuyo-no shuho-no kakuritsu-ni kansuru kenkyu* (Research on examining the scope of the Act for the Comprehensive Support of Persons with Disabilities and establishing a method for using data for plans for welfare of persons with disabilities; Primary researcher: Kumiko Imahashi)

このパンフレットのデザイン・イラストは以下の研究費により制作されました。
厚生労働科学行政推進調査事業費「障害者総合支援法の対象範囲の検討と障害福祉計画の作成に向けたデータ利活用の手法の確立に関する研究」（研究代表：今橋久美子）



**[ Guideline for use of this booklet ]** You are free to print and distribute this booklet.
However, you cannot modify the booklet without permission from the Information and Support Center for Persons with Developmental Disorders.

**〔パンフレットのご利用について〕**このパンフレットは原則、印刷・配布は自由です。
なお、パンフレットの内容について、発達障害情報・支援センターに無断で改変をおこなうことはできません。

発行：国立障害者リハビリテーションセンター 企画情報部 発達障害情報・支援センター
Information and Support Center for Persons with Developmental Disorders,
Department of Planning and Information, National Rehabilitation Center for Persons with Disabilities
ウェブサイト https://www.rehab.go.jp/ddis/

ひと、くらし、みらいのために
厚生労働省
Ministry of Health, Labour and Welfare

Developmental Disorders Web Portal
発達障害ナビポータル
国が提供する発達障害に特化したポータルサイト